# ທີ່ພັກອາໄສທີ່ເປັນທັມສໍາລັບ ຜູ້ພິການ



ມັນຜິດກົດໝາຍສໍາລັບເຈົ້າຂອງເຮືອນເຊົ່າທີ່ຈະຈໍາແນກຕ້ານຕໍ່ທ່ານ ຖ້າຫາກ ທ່ານພິການ ຫຼື ຖ້າຫາກທ່ານມີໝູ່ເພື່ອນ ຫຼື ຄອບຄົວທີ່ມີຄົນພິການ.

## ບັນດາບຸກຄົນທີ່ພິການໄດ້ຮັບການປົກປ້ອງແນວໃດແດ່?

- ເຈົ້າຂອງເຮືອນເຊົ່າບໍ່ໄດ້ຮັບອະນຸຍາດທີ່ຈະຖາມວ່າຜູ້ສະໝັກ ຫຼື ຜູ້ເຊົ່າເຮືອນນັ້ນພິການ ຫຼື ເຈັບເປັນບໍ່, ຖາມເອົາຂໍ້ມູນກ່ຽວກັບວ່າສິ່ງທີ່ທ່ານເປັນນັ້ນຮ້າຍແຮງປານໃດ, ຫຼື ຂໍເບິ່ງປະຫວັດການປິ່ນປົວຕ່າງໆ.

- ຫຼັງຈາກຍ້າຍເຂົ້າໄປແລ້ວ, ບຸກຄົນທີ່ພິການມີສິດທີ່ຈະຖາມເຈົ້າຂອງເຮືອນເຊົ່າໃຫ້ແກ້ໄຂກົດລະບຽບ, ຂັ້ນຕອນ ຫຼື ການບໍລິການທີ່ສົມເຫດຜົນເພື່ອໃຫ້ງ່າຍຕໍ່ການຢູ່ອາໄສຂອງເຂົາເຈົ້າ.

- ເຈົ້າຂອງເຮືອນເຊົ່າຕ້ອງອະນຸຍາດໃຫ້ບຸກຄົນທີ່ພິການສາມາດດັດແປງທີ່ສົມເຫດຜົນຕໍ່ທີ່ພັກອາໄສຂອງຕົນໂດຍອອກຄ່າໃຊ້ຈ່າຍເອງ. ຖ້າຫາກ ເຈົ້າຂອງເຮືອນເຊົ່າໄດ້ຮັບທຶນຊ່ວຍເຫຼືອຈາກຣັຖບານກາງ, ເຂົາອາດຕ້ອງຈ່າຍໃຫ້ສໍາລັບຄ່າດັດແປງຕ່າງໆ ນັ້ນ.

- ທີ່ພັກອາໄສສໍາລັບຫຼາຍຄອບຄົວທີ່ສ້າງຫຼັງປີ 1991, ຕ້ອງເປັນໄປຕາມຂໍ້ກໍານົດຂອງຣັຖບານທີ່ຈະເຮັດໃຫ້ອາຄານສາມາດເຂົ້າເຖິງໄດ້ສໍາລັບບຸກຄົນທີ່ພິການ.

**ສະພາດູແລທີ່ພັກອາໄສທີ່ເປັນທັມແຫ່ງຣັຖອໍຣິກອນຢູ່ນີ້ເພື່ອຊ່ວຍທ່ານ!**

ຖ້າຫາກທ່ານຄິດວ່າ ທ່ານໄດ້ປະເຊີນກັບການຈໍາແນກຕ້ານຕໍ່ບຸກຄົນ, ຫຼື ຖ້າຫາກທ່ານຕ້ອງການຂໍ້ມູນຕື່ມກ່ຽວກັບສິດທິຂອງທ່ານ, ທ່ານສາມາດໂທຣໄປທີ່ສາຍໂທຣດ່ວນຂອງພວກເຮົາທີ່ **1-800-424-3247**, ຕໍ່ 2, ຫຼື ຢ້ຽມຊົມເວັບໄຊ **www.fhco.org**.

<u>ຕົວຢ່າງຂອງການອໍານວຍຄວາມສະດວກທີ່ສົມເຫດຜົນ:</u>

- ມີສັດລ້ຽງຄອຍຊ່ວຍເຫຼືອເຖິງແມ່ນວ່າຈະບໍ່ມີນະໂຍບາຍດ້ານສັດລ້ຽງ.
- ບໍ່ຕ້ອງຈ່າຍຄ່າມັດຈໍາ ຫຼື ຄ່າທໍານຽມສໍາລັບສັດລ້ຽງທີ່ຊ່ວຍເຫຼືອ.
- ການອະນຸຍາດໃຫ້ຜູ້ເບິ່ງແຍງຢູ່ນໍາເຖິງແມ່ນວ່າຈະບໍ່ແມ່ນຜູ້ເຊົ່າເຮືອນ.
- ການຈັດຫາບ່ອນຈອດຣົຖສະເພາະໃກ້ກັບບ່ອນຢູ່ຂອງທ່ານ.

<u>ຕົວຢ່າງຂອງການດັດແປງທີ່ສົມເຫດຜົນ:</u>

- ການປ່ຽນລູກບິດປະຕູດ້ວຍລູກບິດແບບເຫຼັກງັດ.
- ຂະຫຍາຍທາງຍ່າງໃຫ້ກວ້າງສໍາລັບການໃຊ້ຣົຖລໍ້.
- ເພີ່ມທາງລາດລົງທາງໜ້າປະຕູສໍາລັບການໃຊ້ຣົຖລໍ້.
- ການຕິດຕັ້ງຮາວຈັບໃນຫ້ອງນໍ້າ.

## ມີຫຍັງແດ່ທີ່ທ່ານສາມາດເຮັດໄດ້?

- ເກັບຮັກສາເອກະສານທັງໝົດ - ບັນທຶກ, ແຈ້ງການ, ໃບຮັບ, ຂໍ້ຄວາມໃນໂທຣະສັບ, ຂໍ້ມູນຕິດຕໍ່, ຈົດໝາຍ, ອື່ນໆ.
- ຖ່າຍຮູບບັນຫາ ຖ້າວ່າທ່ານເຮັດໄດ້.
- ເອົາຊື່ ແລະຈໍານວນຄົນທີ່ກ່ຽວຂ້ອງ.
- ເອົາຕົວເລກ - ວັນທີເກີດເຫດການ, ທີ່ຢູ່ບ່ອນທີ່ເກີດເຫດການ, ຄ່າໃຊ້ຈ່າຍຕ່າງໆ.
- ລົມກັບເພື່ອນບ້ານ – ມີໃຜອີກແດ່ທີ່ກໍາລັງປະສົບກັບບັນຫານີ້? ໃຜເຫັນເຫດການແດ່?



*ສະພາດູແລທີ່ພັກອາໄສທີ່ເປັນທັມ (FHCO) ແມ່ນອົງການເພື່ອສິດທິພົນລະເມືອງທີ່**ບໍ່ແມ່ນຂອງຣັຖບານ** ແລະ ບໍ່ສະແຫວງຫາຜົນກໍາໄລຊຶ່ງໃຫ້ການຮັບໃຊ້ໃນຣັຖອໍຣິກອນ.*

EQUAL HOUSING OPPORTUNITY

ວຽກທີ່ເປັນພື້ນຖານສໍາລັບການຕີພິມນີ້ແມ່ນໄດ້ຮັບການສະໜັບສະໜູນຈາກກອງທຶນພາຍໃຕ້ທຶນຊ່ວຍເຫຼືອຂອງກະຊວງດູແລທີ່ພັກອາໄສແລະການພັດທະນາເມືອງຂອງສະຫະຣັຖອາເມລິກາ. ເນື້ອໃນແລະວຽກນີ້ແມ່ນອຸທິດໃຫ້ແກ່ສາທາລະນະ. ຜູ້ແຕ່ງແລະຜູ້ພິມຮັບຜິດຊອບແຕ່ພຽງ ຜູ້ດຽວຕໍ່ຄວາມຖືກຕ້ອງຂອງຂໍ້ຄວາມແລະການຕີຄວາມທີ່ບັນຈຸຢູ່ໃນ ສິ່ງຕີພິມນີ້. ການຕີຄວາມດັ່ງກ່າວບໍ່ຈໍາເປັນຕ້ອງສະທ້ອນເຖິງຄວາມຄິດເຫັນຂອງຣັຖບານກາງ.

**ມີຂໍ້ມູນການບໍລິການສະໜອງໃຫ້ໃນຮູບແບບອື່ນ ແລະມີບໍລິການແປພາສາ.**